# ບັນທຶກຄວາມເຂົ້າໃຈ ( Memorandum of Understanding : MOU )

## ສະບັບທີ 1 ປະຈໍາປີ ຄສ 2022

## ເລື່ອງ ການຮ່ວມມືດ້ານສາທາລະນະສຸກລະດັບທ້ອງຖິ່ນ

## ລະຫວ່າງ

## ພະແນກສາທາລະນະສຸກແຂວງສະຫັວນນະເຂດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກັບ

## ສໍານັກງານສາທາລະນະສຸກຈັງຫວັດມຸກດາຫານ ແຫ່ງ ຣາຊອານາຈັກໄທ

ຈັງຫວັດມຸກດາຫານຣາຊອານາຈັກໄທ ທີ່ມີຊາຍແດນຕິດກັບແຂວງສະຫັວນນະເຂດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ປະຊາຊົນທັງສອງຝ່າຍເດີນທາງໄປມາຫາສູ່ຢ່າງສະດວກສະບາຍ ເພື່ອທໍາການຄ້າຂາຍ ການຂົນສົ່ງ ແລະ ການທ່ອງທ່ຽວ ລວມທັງການຢັ້ງຢາມຍາດຕິພີ່ນ້ອງ ມີການຮ່ວມມືຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນການດໍາເນີນວຽກງານດ້ານຕ່າງໆ ລວມທັງດ້ານສາທາລະນະສຸກຢ່າງຕໍ່ເນື່ອງ ແລະ ກົດລະບຽບສາທາລະນະສຸກ ລະຫວ່າງປະເທດ ປີ 2005 (International Health Regulations 2005 : IHR 2005) ຂອງອົງການອະນາໄມໂລກ ໄດ້ກໍານົດໃຫ້ປະເທດສາມາຊິກດໍາເນີນການປະເມີນ ແລະ ພັດທະນາ ໜ່ວຍງານສາທາລະນະສຸກ ໃນການເຝົ້າລະວັງ ແລະ ປ້ອງກັນຄວບຄຸມຄຸມພະຍາດຕິດຕໍ່ ເຊິ່ງລວມເຖິງການກັ່ນກອງຜູ້ເດີນທາງ ຍານພະຫະນະ ແລະ ສິນຄ້າທີ່ເຂົ້າ ແລະ ອອກ ຜ່ານຊາຍແດນ ລວມທັງລະບຽບ ແລະ ກົດໝາຍທີ່ແຕ່ລະປະເທດໄດ້ກໍານົດໄວ້. ຈັງຫວັດມຸກດາຫານ ແລະ ແຂວງສະຫັວນນະເຂດໄດ້ດໍາເນີນການຮ່ວມມືໂຄງການເຝົ້າລະວັງພະຍາດປະເທດເຂດລຸ່ມແມ່ນໍ້າຂອງ (Mekong Basin Disease Surveillance : MBDS ) ຮ່ວມກັນມາຕັ້ງແຕ່ປີ ຄສ 2004 ຈົນເຖິງປະຈຸບັນໃນລະຫວ່າງປີ ຄສ 2020-2022 ມີການລະບາດພະຍາດຂອງພະຍາດໂກໂຣນາໄວຣັດ 2019 (COVID-19 pandemic) ເຊິ່ງມີການດໍາເນີນການຮ່ວມມືການເຝົ້າລະວັງ ແລະ ປ້ອງກັນຄວບຄຸມພະຍາດຕາມຊາຍແດນລະຫວ່າງແຂວງສະຫັວນນະເຂດ ແລະ ຈັງຫວັດມຸກດາຫານມາຢ່າງຕໍ່ເນື່ອງພາຍໃຕ້ສະພາບແວດລ້ອມຕາມມາດຕະການປ້ອງກັນຄວບຄຸມການແຜ່ລະບາດຂອງພະຍາດ COVID- 19 ຂອງທັງສອງປະເທດຢ່າງເຂັ້ມງວດ;

ດັ່ງນັ້ນ, ເພື່ອສົ່ງເສີມສະໜັບສະໜູນໃຫ້ການຮ່ວມມືໃນການດໍາເນີນວຽກງານດ້ານສາທາລະນະສຸກ ແລະ ວຽກງານເຝົ້າລະວັງ ປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ລະຫວ່າງທີ່ມີຢູ່ໃນປະຈຸບັນ ເປັນໄປຢ່າງຕໍ່ເນື່ອງ ມີປະສິດທິພາບ ແລະ ເປັນຮູບປະທໍາ ສາມາດນໍາໄປສູ່ການປະຕິບັດທີ່ແທ້ຈິງໂດຍໜ່ວຍງານທີ່ກ່ຽວຂ້ອງເພື່ອສົ່ງເສີມຄວາມສໍາພັນ ແລະ ມິດຕະພາບອັນດີ ລະຫວ່າງໜ່ວຍງານ ບຸກຄະລາກອນທີ່ກ່ຽວຂ້ອງ ແລະ ປະຊາຊົນຂອງທັງສອງຝ່າຍ ຄື ແຂວງສະຫັວນນະເຂດ ແລະ ຈັງຫວັດມຸກດາຫານໃຫ້ມີຄວາມຍືນຍົງ, ຈຶ່ງໄດ້ຕົກລົງທີ່ຈະມີການຮ່ວມມືດ້ານສາທາລະນະສຸກ ຮ່ວມກັນດັ່ງຕໍ່ໄປນີ້:

1. ແລກປ່ຽນຂໍ້ມູນ 18 ພະຍາດຕາມໂຄງການຮ່ວມມືການເຝົ້າລະວັງພະຍາດປະເທດເຂດລຸ່ມແມ່ ນໍ້າຂອງ (Mekong Basin Disease Surveillance, MBDS), ພະຍາດ COVID-19, ພະຍາດຕິດຕໍ່ຕາມ IHR, ການກັ່ນກອງຜູ້ເດີນທາງຜ່ານດ່ານ (Screening at Quarantine) ແລະ ກິດຈະກໍາການດໍາເນີນວຽກງານຜ່ານ Website www.MSQ-Health.com

2. ພັດທະນາຄວາມສາມາດບຸກຄະລາກອນທີ່ກ່ຽວຂ້ອງທຸກລະດັບໃນການເຝົ້າລະວັງ ແລະ ການປ້ອງກັນຄວບຄຸມພະຍາດຕິດຕໍ່ລວມເຖິງການເຝົ້າລະວັງສຸຂະພາບໜຶ່ງດຽວ (One Health) ແລະ IHR ລະຫວ່າງປະເທດ ແຂວງສະຫວັນນະເຂດ-ຈັງຫວັດມຸກດາຫານ
3. ຝຶກຊ້ອມແຜນລະຫວ່າງປະເທດ ດ້ານການຕອບໂຕ້ພາວະສຸກເສີນ ດ້ານສາທາລະນະສຸກ ແລະ ຜົນກະທົບທາງດ້ານສຸຂະພາບຮ່ວມກັນຢ່າງຕໍ່ເນື່ອງ
4. ຮ່ວມມືໃນການປິ່ນປົວ ສົ່ງຕໍ່ຄົນເຈັບ ລະຫວ່າງປະເທດ ແລະ ການຕອບໂຕ້ພາວະສຸກເສີນດ້ານສາທາລະນະສຸກ ແລະ ຜົນກະທົບທາງດ້ານສຸຂະພາບ ລວມເຖິງອຸບັດຕິເຫດຈຳນວນຫລາຍ ທີ່ອາດເກີດຂຶ້ນລະຫວ່າງປະເທດ, ແຂວງສະຫວັນນະເຂດ-ຈັງຫວັດມຸກດາຫານ

ບົດບັນທຶກຄວາມເຂົ້າໃຈ (MOU) ສະບັບນີ້ມີຜົນສັກສິດນັບຕັ້ງແຕ່ ວັນທີທັງສອງຝ່າຍໄດ້ລົງລາຍເຊັນ ແລະ ເຮັດບົດບັນທຶກຂໍ້ຕົກລົງຄວາມຮ່ວມມືເປັນຕົ້ນໄປເປັນໄລຍະ 05 ປີ ເຖິງວັນທີ 18 ສິງຫາ 2027 ພ້ອມນີ້ສາມາດປັບປຸງ ປ່ຽນແປງ ແກ້ໄຂ ເພີ່ມເຕີມບັນທຶກ ໄດ້ຕາມສະຖານະການ ແລະ ຕາມການຕົກລົງຮ່ວມກັນຂອງທັງສອງຝ່າຍ

ບັນທຶກຄວາມເຂົ້າໃຈ ສະບັບນີ້ ຈັດຂຶ້ນທີ່ໂຮງແຮມມຸກດາຫານແກຣນ ຈັງຫວັດມຸກດາຫານ ຄັ້ງວັນທີ 18 ສິງຫາ 2022 ເປັນສອງພາສາໄດ້ແກ່ພາສາລາວ ແລະ ພາສາໄທ ໂດຍມີຄຸນຄ່າເທົ່າທຽມກັນທັງສອງສະບັບ.

ຫົວໜ້າຄະນະຜູ້ແທນສາທາລະນະສຸກຝ່າຍໄທ
ຈັງຫວັດມຸກດາຫານ
ຣາຊອານາຈັກໄທ

(ນາຍປຣະວິດ ສີບຸນຣັດ)
ນາຍແພດສາທາລະນະສຸກຈັງຫວັດມຸກດາຫານ
ວັນທີ 18 ສິງຫາ 2022

ຫົວໜ້າຜູ້ແທນສາທາລະນະສຸກຝ່າຍລາວ
ແຂວງສະຫວັນນະເຂດ
ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

(ດຣ ແສງດາວ ສິດາໄລ)
ຫົວໜ້າພະແນກສາທາລະນະສຸກແຂວງສະຫວັນນະເຂດ
ວັນທີ 18 ສິງຫາ 2022